ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ
ເລກທີ 5142 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 9 ຕຸລາ 2024

## ໜັງສືແຈ້ງການ

**ຮຽນ:** ທ່ານ ຫົວໜ້າ ພະແນກສຶກສາທິການ ແລະ ກິລາ ແຂວງ ແລະ ນະຄອນຫຼວງວຽງຈັນ

**ເລື່ອງ:** ການສະໜອງເບ້ຍລ້ຽງຂອງອົງການອຸຍນິເຊັບ (UNICEF) ໃຫ້ແກ່ນັກຮຽນທຸກຍາກ ແລະ ດ້ອຍໂອກາດ ຂັ້ນ ປ.2 ສົກຮຽນ 2024-2025 ຈົນຮຽນຈົບຊັ້ນປະຖົມສຶກສາ

- ອີງຕາມ ແຜນງົບປະມານປະຕິບັດກິດຈະກຳ ຂອງກົມສາມັນສຶກສາ ສະບັບລົງວັນທີ 30 ກັນຍາ 2024.

ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ອົງການອຸຍນິເຊັບ (UNICEF) ຂໍສະໜອງເບ້ຍລ້ຽງເພີ່ມ ໃຫ້ແກ່ນັກຮຽນຜູ້ທຸກຍາກ ແລະ ດ້ອຍໂອກາດ ຊັ້ນປະຖົມສຶກສາ (ຂັ້ນ ປ.2) ສົກຮຽນ 2024-2025 ເປັນຕົ້ນໄປຈົນກວ່າຮຽນຈົບຊັ້ນປະຖົມສຶກສາ ເປົ້າໝາຍທີ່ໄດ້ຮັບການສະໜັບສະໜູນຄັ້ງນີ້ແມ່ນ ນັກຮຽນ ຂັ້ນ ປ.1 ທີ່ໄດ້ຮັບເບ້ຍລ້ຽງຂອງລັດຖະບານ ສົກຮຽນ 2023-2024, ໃນຂໍ້ຕົກລົງ ຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1127/ສສກ, ລົງວັນທີ 12 ມີນາ 2024 ແລະ ລາຍຊື່ນັກຮຽນທຸກຍາກ ແລະ ດ້ອຍໂອກາດ ທີ່ໄດ້ຮັບເບ້ຍລ້ຽງລັດຖະບານ ສົກຮຽນ2023-2024 ສະບັບເລກທີ 405/ສມ-422/ສມ, ລົງວັນທີ 29 ກຸມພາ 2024. ລາຍລະອຽດມີດັ່ງນີ້:

1. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ ກວດກາຄືນ ນັກຮຽນທີ່ມີຊື່ຮັບເບ້ຍລ້ຽງມີໜ້າເຂົ້າຮຽນຕົວຈິງບໍ? ຖ້າມີນັກຮຽນອອກແມ່ນທາງແຂວງເປັນຜູ້ຄັດເລືອກນັກຮຽນທົດແທນ ໂດຍອີງໃສ່ ປຶ້ມຄູ່ມື ການສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນສາມັນສຶກສາພາກລັດ(ສະບັບປັບປຸງ ປີ 2020);
2. ອົງການ UNICEF ຈະຊ່ວຍອັດຕາເບ້ຍລ້ຽງເພີ່ມຜູ້ລະ 100.000 ກີບ(ໜຶ່ງແສນກີບ)/ຄົນ/ເດືອນ ໃນຈຳນວນ 9 ເດືອນ ຂອງແຕ່ລະປີ ໂດຍຈະໂອນໃຫ້ແຂວງເປັນ 2 ງວດ ຄື:
   - ງວດທີ 1: 5 ເດືອນ, ເລີ່ມແຕ່ເດືອນ ກັນຍາ 2024-ເດືອນ ມັງກອນ 2025;
   - ງວດທີ 2: 4 ເດືອນ, ແຕ່ເດືອນ ກຸມພາ-ເດືອນ ພຶດສະພາ 2025.

   **(ໃນແຕ່ລະສົກຮຽນຈະຈ່າຍໂອນເປັນ 2 ງວດ ຈົນກວ່ານັກຮຽນຮຽນຈົບຊັ້ນປະຖົມສຶກສາ)**
3. ໃຫ້ແຂວງຄິດໄລ່ຄ່າໃຊ້ຈ່າຍໃນການໂອນແຂວງ-ເມືອງ-ໂຮງຮຽນ ໃຫ້ລະອຽດ ເພື່ອແຈ້ງໃຫ້ອົງການອຸຍນິເຊັບ (UNICEF) ແລະ ໃຫ້ຮັກສາໃບບິນການໂອນ ເພື່ອຢັ້ງຢືນການໃຊ້ຈ່າຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມໜັງສືແຈ້ງການສະບັບນີ້ດ້ວຍ.

ຮອງ ຫົວໜ້າຫ້ອງການ

ສຸພາບ ຄູນວິໄຊ

**ໝາຍເຫດ:**
ພົວພັນເພີ່ມເຕີມຕິດຕໍ່ 020 55441133/02095465701